ກະຊວງ ກະສິກຳ ແລະ ປ່າໄມ້

ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ

ສູນຄົ້ນຄ້ວາກະສິກກຳເຂດພູດອຍ

# ບາງຂໍ້ແນະນຳກ່ຽວກັບ ການປູກ ແນວພັນ ເຂົ້າໜອນ (ເຂົ້າໜຽວ)



ມີນາ 2014

**ປະຫວັດຄວາມເປັນມາ**

ເຂົ້າໜອນ (LG-13010) ເປັນແນວພັນເຂົ້າພື້ນເມືອງຂອງທ້ອງຖິ່ນ ເມືອງປາກລາຍ, ແຂວງໄຊຍະບູລີ, ແລະ ໃນປີ 2001 ໄດ້ນຳໄປປູກເພື່ອຄັດເລືອກ ແລະ ໃນປີ 2003 ຈຶ່ງໄດ້ນຳໄປປູກທົດສອບໃນພື້ນທີ່ໄຮ່ຂອງຊາວກະສິກອນຢູ່ 8 ແຂວງພາກ ເໜືອ ແລະ ເຫັນວ່າມີການຈະເລີນເຕີບໂຕດີ, ໃຫ້ຜົນຜະລິດສູງ ແລະ ເປັນທີ່ຍອມຮັບຂອງຊາວກະສິກອນ. ສະນັ້ນ, ຈຶ່ງເລີ້ມມີການປູກຂະຫຍາຍ ແລະ ແຜ່ກະຈາຍນັບຕັ້ງແຕ່ ປີ 2006 ເປັນຕົ້ນມາ.

**ລັກສະນະປະຈຳພັນ**

- ເປັນປະເພດເຂົ້າໜຽວມີຄວາມຮູ້ສຶກຕໍ່ຊ່ວງແສງ, ອາຍຸ 140 – 145, ເປັນເຂົ້າກາງ
- ຊ່ວງປູກ ທ້າຍເດືອນ ເມສາ (4) - ຕົ້ນເດືອນ ມິຖຸ (6) ຊ່ວງໄລຍະຝົນຕົກ.
- ລຳຕົ້ນສູງປານກາງ 105-140 ຊັງຕີແມັດ.
- ໃບເປັນສີຂຽວ, ແຜ່ນໃບມີຂົນ.
- ເມັດເຂົ້າເປືອກມີຂົນ ເປັນສີນ້ຳຕານແດງ.

- ຄວາມຍາວຂອງເມັດເຂົ້າເປືອກ 9.2 ມີນລີແມັດ, ກ້ວາງ 3.4 ມີນລີແມັດ, ໜາ 2.3 ມີນລີແມັດ.
- ເມັດເຂົ້າສານ ຍາວ 5.8 ມີນລີແມັດ, ກ້ວາງ 2.5 ມີນລີແມັດ, ໜາ 1.70 ມີນລີແມັດ.
- ຄຸນນະພາບການກິນດີ, ອ່ອນ, ເມັດເຂົ້າສານສີຂາວ, ປະລິມານອາມີໂລດ (6.8%)
- ເປີເຊັນການສີ 69%
- ນ້ຳໜັກ 1000 ເມັດ 28 ກຣາມ.






**ລັກສະນະເດັ່ນ**

- ຜົນຜະລິດສູງ, ສາມາດປູກໄດ້ດີໃນດິນຂີ້ລ້າຍ ແລະ ພື້ນທີ່ປູກເຂົ້າຕໍ່ເນື່ອງ 2 - 3 ປີ.
- ສາມາດປູກໄດ້ໃນລະດັບຄວາມສູງຈາກໜ້ານ້ຳ ທະເລ 300 – 1000 ແມັດ.
- ທົນທານຕໍ່ແມງໄຂ່ປາ (Root aphid)
- ສາມາດປູກໄດ້ໃນພື້ນທີ່ນາ ແລະ ນາຂາດນ້ຳ






**ຜົນຜະລິດ**

ເຂົ້າໜອນ ສາມາດໃຫ້ຜົນຜະລິດສູງກ່ວາແນວພັນເຂົ້າ
ຂອງຊາວກະສິກອນເຖິງ15-35%ຫຼື 267-515 ກລ/ຮຕ.
ໃນສະພາບຂອງດິນທີ່ແຕກຕ່າງກັນ ຮູບທີ່ 1. ສຳລັບການ
ນຳໃຊ້ຝຸ່ນໃນໄຮ່ເຂົ້າແມ່ນບໍ່ແນະນຳໃສ່ເພາະ ວ່າ ການ
ຕອບສະໜອງຕໍ່ຝຸ່ນຂອງແນວພັນເຂົ້າໜອນແມ່ນ
ຕ່ຳ ຫຼື ບໍ່ເປັນເສດຖະກິດ.




ຮູບທີ່ 1. ຜົນຜະລິດແນວພັນເຂົ້າໜອນທຽບພັນທ້ອງຖິ່ນ.

**ພື້ນທີ່ແນະນຳປູກ**

ເຂດພາກເໜືອ, ພາກກາງ ແລະ ພາກໃຕ້ເຊັ່ນ: ແຂວງຫຼວງ ພະບາງ, ແຂວງໄຊຍະບຸລີ, ແຂວງອຸດົມໄຊ, ແຂວງຫຼວງນ້ຳທາ, ແຂວງບໍ່ແກ້ວ, ແຂວງຊຽງຂວາງ, ແຂວງຫົວພັນ, ແຂວງຜົ້ງສາລີ, ແຂວງສະຫັວນນະເຂດ ແລະ ແຂວງອັດຕາປື.

**ຂໍ້ຄວນລະວັງ**

- ທົນທານຕໍ່ພະຍາດຈຸດສີນ້ຳຕານ (Brown spot)
- ລຳຕົ້ນນ້ອຍ, ລົ້ມຖ້າປູກໃນພື້ນທີ່ດິນອຸດົມສົມບູນ.

**ສອບຖາມຂໍ້ມູນເພີ່ມເຕີມຕິດຕໍ່:**

ສູນຄົ້ນຄ້ວາກະສິກຳເຂດພູດອຍ

ໂທ: (856-71) 212099

ແຟກ: (856-71) 212467

ຕູ້ ປ. ນ: 487, ແຂວງຫຼວງພະບາງ